ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ

ເລກທີ 379/ຄກສພ.

ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2023.

# ຄໍາແນະນໍາ

## ກ່ຽວກັບການປັບປຸງການຈັດຕັ້ງຄະນະກວດກາພັກ ແລະ ອົງການກວດກາລັດແຕ່ລະຂັ້ນ

- ອີງຕາມ ກົດລະບຽບພັກປະຊາຊົນ ປະຕິວັດລາວ ສະໄໝທີ XI ໝວດທີ XI ມາດຕາ 50;
- ອີງຕາມ ກົດໝາຍວ່າດ້ວຍການກວດກາລັດ ເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກວດກາສູນກາງພັກ ເລກທີ 03/ກມສພ, ລົງວັນທີ 19 ມັງກອນ 2022;
- ອີງຕາມ ລັດຖະດໍາລັດ ຂອງປະທານປະເທດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາແຫ່ງລັດ ເລກທີ 141/ປປທ, ລົງວັນທີ 28 ກັນຍາ 2023.

ໃນໄລຍະຜ່ານມາຄະນະພັກ, ອົງການປົກຄອງຂັ້ນຕ່າງໆ ໄດ້ມີການນໍາພາ-ຊີ້ນໍາ ປັບປຸງກົງຈັກການຈັດຕັ້ງ, ພາລະບົດບາດ ຂອງຄະນະກວດກາພັກ, ອົງການກວດກາລັດຂັ້ນຂອງຕົນ ຕາມກົດລະບຽບຂອງພັກ ແລະ ກົດໝາຍວ່າດ້ວຍການກວດກາລັດ; ພ້ອມດຽວກັນນັ້ນ ຜ່ານການຈັດຕັ້ງປະຕິບັດບົດແນະນໍາກ່ຽວກັບການປັບປຸງການຈັດຕັ້ງຂອງຄະນະກວດກາພັກ, ອົງການກວດກາລັດ ຢູ່ກະຊວງ-ອົງການ ແລະ ທ້ອງຖິ່ນ ສະບັບເລກທີ 192/ຄກສພ, ລົງວັນທີ 26 ມິຖຸນາ 2017 ເຫັນວ່າການປັບປຸງກົງຈັກການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດກາລັດ ແຕ່ລະຂັ້ນ ບໍ່ທັນເປັນເອກະພາບ ແລະ ແທດເໝາະກັບສະພາບຄວາມເປັນຈິງ, ການປະກອບບຸກຄະລາກອນເຂົ້າໃສ່ກົງຈັກການຈັດຕັ້ງຂອງຄະນະກວດກາບໍ່ທັນແທດເໝາະ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງ ຂອງຄະນະກວດກາພັກ, ອົງການກວດກາລັດແຕ່ລະຂັ້ນ ໄດ້ຮັບການປັບປຸງຕາມທິດຊີ້ນໍາຂອງມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ ຄັ້ງທີ IV, ກົດໝາຍວ່າດ້ວຍການກວດກາລັດ(ສະບັບປັບປຸງ 2022); ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຈຶ່ງອອກຄໍາແນະນໍາດັ່ງນີ້:

**I. ລະບົບກົງຈັກການຈັດຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງຄະນະກວດກາພັກ ແລະ ອົງການກວດກາລັດແຕ່ລະຂັ້ນ:**

ກ. ລະບົບກົງຈັກການຈັດຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງຄະນະກວດກາພັກ ແຕ່ລະຂັ້ນ

1. ລະບົບການຈັດຕັ້ງຂອງຄະນະກວດກາພັກປະກອບມີ:

- ຄະນະກວດກາສູນກາງພັກ;
- ຄະນະກວດກາພັກກະຊວງ-ອົງການ;
- ຄະນະກວດກາພັກແຂວງ, ນະຄອນຫຼວງ;
- ຄະນະກວດກາພັກເມືອງ, ນະຄອນ;
- ຄະນະກວດກາ ຂອງຄະນະພັກຮາກຖານ ແລະ ຜູ້ກວດກາໜ່ວຍພັກ.

❖ ລະບົບສາຍໃຍການຈັດຕັ້ງຄະນະກວດກາພັກ ໃນກອງທັບປະຊາຊົນລາວ ແລະ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

1) ຄະນະກວດກາພັກ ໃນກອງທັບປະຊາຊົນລາວ ມີ 04 ຂັ້ນ:

- ຄະນະກວດກາພັກກະຊວງປ້ອງກັນປະເທດ;

- ຄະນະກວດກາພັກກົມໃຫຍ່, ເຂດທະຫານ, ວິທະຍາຄານ, ກອງບັນຊາການເຫຼົ່າຮົບ, ກອງພົນ, ກອງພັນໃຫຍ່ເອກະລາດ ແລະ ທຽບເທົ່າ;

- ຄະນະກວດກາພັກກອງພັນໃຫຍ່ຂຶ້ນກັບກອງພົນ ແລະ ທຽບເທົ່າ;

- ຄະນະກວດກາພັກ ຫຼື ຜູ້ກວດກາຂອງໜ່ວຍພັກ.

2) ຄະນະກວດກາພັກ ໃນກຳລັງປ້ອງກັນຄວາມສະຫງົບປະຊາຊົນ ມີ 03 ຂັ້ນ:

- ຄະນະກວດກາພັກກະຊວງປ້ອງກັນຄວາມສະຫງົບ;

- ຄະນະກວດກາພັກກົມໃຫຍ່ ແລະ ທຽບເທົ່າ;

- ຄະນະກວດກາພັກ ຫຼື ຜູ້ກວດກາຂອງໜ່ວຍພັກ.

**2. ໂຄງປະກອບບຸກຄະລາກອນ ຂອງຄະນະກວດກາພັກ.**

- ຄະນະກວດກາພັກແຕ່ລະຂັ້ນ ປະກອບມີ: ປະທານຄະນະກວດກາພັກ ໂດຍຄົ້ນຄວ້າເລືອກຕັ້ງເອົາສະຫາຍຮອງເລຂາ ຫຼື ຄະນະປະຈຳພັກ, ບ່ອນທີ່ບໍ່ມີຄະນະປະຈຳພັກ ໃຫ້ເລືອກເອົາສະຫາຍຮອງເລຂາ ຫຼື ກຳມະການພັກເປັນປະທານ; ສ່ວນຮອງປະທານຄະນະກວດກາພັກ ໃຫ້ເລືອກຕັ້ງເອົາສະຫາຍກຳມະການພັກ ຈຳນວນ 01 ຫາ 02 ສະຫາຍ ແລະ ອີກຈຳນວນໜຶ່ງ ເລືອກເອົາຜູ້ທີ່ບໍ່ແມ່ນກຳມະການພັກ.

- ວິທີເລືອກຕັ້ງຄະນະກວດກາພັກ ແມ່ນກອງປະຊຸມຄັ້ງປະຖົມມະລຶກ ຫຼື ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານພັກຂັ້ນນັ້ນ ເປັນຜູ້ເລືອກຕັ້ງ, ດ້ວຍການລົງຄະແນນສຽງປິດລັບໂດຍກົງ ແລະ ນັບຄະແນນເປີດເຜີຍ ຫຼື ດ້ວຍວິທີຍົກມືຮັບຮອງເອົາ; ພາຍຫຼັງເລືອກຕັ້ງໄດ້ແລ້ວ ຕ້ອງສົ່ງລາຍຊື່ຄະນະກວດກາພັກທີ່ໄດ້ຮັບການເລືອກຕັ້ງນັ້ນເພື່ອສະເໜີໃຫ້ຄະນະພັກຂັ້ນເທິງຖັດຕົນ ຮັບຮອງເປັນທາງການ. ສຳລັບຢູ່ຂັ້ນຄະນະພັກຮາກຖານ, ໜ່ວຍພັກຮາກຖານ ແລະ ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ ແມ່ນໃຫ້ປະຕິບັດດັ່ງນີ້:

1) ບ່ອນໃດທີ່ຈັດຕັ້ງເປັນຄະນະພັກຮາກຖານ ແມ່ນໃຫ້ເລືອກຕັ້ງເອົາປະທານກວດກາພັກ 01 ສະຫາຍ ແລະ ຮອງປະທານກວດກາພັກ ຈຳນວນໜຶ່ງ.

2) ຢູ່ຂັ້ນໜ່ວຍພັກນັບທັງໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ໃຫ້ເລືອກຕັ້ງເອົາແຕ່ຜູ້ກວດກາໜ່ວຍພັກ, ກໍລະນີພິເສດ ໜ່ວຍພັກໃດມີສະມາຊິກພັກຫຼາຍກວ່າ 30 ສະຫາຍ, ແຕ່ບໍ່ໄດ້ຈັດຕັ້ງເປັນຄະນະພັກຮາກຖານ ແມ່ນໃຫ້ເລືອກເອົາປະທານກວດກາພັກ 01 ສະຫາຍ ແລະ ຮອງປະທານກວດກາພັກ ຈຳນວນໜຶ່ງ.

**3. ການເລືອກຕັ້ງທົດແທນຕຳແໜ່ງຫວ່າງ, ການຍົກຍ້າຍ ແລະ ປົດຕຳແໜ່ງ ຄະນະກວດກາພັກ ແຕ່ລະຂັ້ນ**

- ໃນກໍລະນີຕຳແໜ່ງປະທານ ຫຼື ຮອງປະທານ ຂອງຄະນະກວດກາພັກແຕ່ລະຂັ້ນ ຫາກຫວ່າງລົງ, ຄະນະບໍລິຫານງານພັກຂັ້ນນັ້ນ ຕ້ອງດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ເພື່ອເລືອກຕັ້ງເອົາປະທານ ຫຼື ຮອງປະທານຄະນະກວດກາພັກ ແທນໃນຕຳແໜ່ງທີ່ຫວ່າງລົງ ແລ້ວສະເໜີຄະນະພັກ ແລະ ຄະນະກວດກາພັກຂັ້ນເທິງຖັດຕົນ ເພື່ອຄົ້ນຄວ້າພິຈາລະນາ ແລະ ອອກມະຕິຕົກລົງຮັບຮອງເອົາຜົນການເລືອກຕັ້ງນັ້ນຢ່າງເປັນທາງການ.

- ໃນກໍລະນີຈຳເປັນຈະຍົກຍ້າຍ ຫຼື ປົດຕຳແໜ່ງ ປະທານ, ຮອງປະທານ ຄະນະກວດກາພັກທີ່ເປັນຮອງເລຂາ

ຄະນະພັກ, ເປັນກຳມະການປະຈຳພັກ, ເປັນກຳມະການພັກ ໃຫ້ກອງປະຊຸມຄົບຄະນະບໍລິຫານງານພັກຂັ້ນນັ້ນ ຕົກລົງເຫັນດີເປັນເອກະພາບ ແລະ ນຳສະເໜີຂໍຄຳເຫັນຈາກຄະນະພັກ ແລະ ຄະນະກວດກາພັກຂັ້ນເທິງຖັດຕົນ ເມື່ອໄດ້ຮັບຄຳຕົກລົງເຫັນດີ ແລ້ວຈຶ່ງຈັດຕັ້ງປະຕິບັດ;

- ການຍົກຍ້າຍ ແລະ ປົດຕຳແໜ່ງຮອງປະທານຄະນະກວດກາພັກ ທີ່ບໍ່ແມ່ນກຳມະການພັກ ຕ້ອງໄດ້ຮັບການເຫັນດີຈາກຄະນະພັກຂັ້ນຕົນ ແລ້ວລາຍງານຂໍຄຳເຫັນຈາກຄະນະກວດກາພັກຂັ້ນເທິງຖັດຕົນຕົກລົງເຫັນດີ ແລ້ວຈຶ່ງຈັດຕັ້ງປະຕິບັດ.

**ຂ. ລະບົບກົງຈັກການຈັດຕັ້ງ ແລະ ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດ ແຕ່ລະຂັ້ນ:**

**1. ລະບົບການຈັດຕັ້ງຂອງອົງການກວດກາລັດ ປະກອບມີ:**

- ອົງການກວດກາແຫ່ງລັດ;
- ອົງການກວດກາລັດ ກະຊວງ-ອົງການ;
- ອົງການກວດກາລັດແຂວງ, ນະຄອນຫຼວງ;
- ອົງການກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ;
- ອົງການກວດກາລັດເມືອງ, ນະຄອນ;

**2. ໂຄງປະກອບບຸກຄະລາກອນຂອງອົງການກວດກາລັດ ແຕ່ລະຂັ້ນ**

**2.1 ອົງການກວດກາແຫ່ງລັດ ປະກອບມີ:**

- ປະທານ ອົງການກວດກາແຫ່ງລັດ;
- ຮອງປະທານ ອົງການກວດກາແຫ່ງລັດ;
- ຫົວໜ້າຫ້ອງການ ແລະ ຫົວໜ້າກົມ;
- ຮອງຫົວໜ້າຫ້ອງການ ແລະ ຮອງຫົວໜ້າກົມ;
- ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານ.

**2.2 ອົງການກວດກາລັດກະຊວງ-ອົງການ ປະກອບມີ:**

- ຫົວໜ້າກົມກວດກາລັດ;
- ຮອງຫົວໜ້າກົມກວດກາລັດ;
- ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານ.

**2.3 ອົງການກວດກາລັດແຂວງ, ນະຄອນຫຼວງ ປະກອບມີ:**

- ປະທານ ອົງການກວດກາລັດ;
- ຮອງປະທານ ອົງການກວດກາລັດ;
- ຫົວໜ້າຫ້ອງການ, ຫົວໜ້າຂະແໜງ;
- ຮອງຫົວໜ້າຫ້ອງການ, ຮອງຫົວໜ້າຂະແໜງ ແລະ ພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານ.

**2.4 ອົງການກວດກາລັດ ຂອງພະແນກການ ອ້ອມຂ້າງແຂວງ, ນະຄອນຫຼວງ ປະກອບມີ:**

- ຫົວໜ້າ ຂະແໜງກວດກາລັດ;
- ຮອງຫົວໜ້າ ຂະແໜງກວດກາລັດ;
- ພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານ.

**2.5 ອົງການກວດກາລັດເມືອງ, ນະຄອນ ປະກອບມີ:**

- ປະທານ ອົງການກວດກາລັດ;
- ຮອງປະທານ ອົງການກວດກາລັດ;
- ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການ ຕາມການກຳນົດຕຳແໜ່ງງານ.

3. ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການກວດກາລັດແຕ່ລະຂັ້ນ.

3.1 ການເລືອກຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການກວດກາແຫ່ງລັດ.

- ປະທານ ອົງການກວດກາແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕໍາແໜ່ງ ໂດຍກອງປະຊຸມສະພາແຫ່ງຊາດ ຕາມການສະເໜີ ຂອງປະທານປະເທດ ແຫ່ງ ສປປ ລາວ;
- ຮອງປະທານອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງໂດຍປະທານປະເທດ ແຫ່ງ ສປປ ລາວ ຕາມການສະເໜີ ຂອງປະທານອົງການກວດກາແຫ່ງລັດ;
- ຫົວໜ້າຫ້ອງການ, ຫົວໜ້າກົມຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ພາຍຫຼັງມີຄວາມເປັນເອກະພາບກັບອົງການທີ່ກ່ຽວຂ້ອງ;
- ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມຂອງອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ບົນພື້ນຖານການເຫັນດີເປັນເອກະພາບ ຂອງກະຊວງພາຍໃນ;
- ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການ ທີ່ສັງກັດຢູ່ອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານ ອົງການກວດກາແຫ່ງລັດ ຕາມການສະເໜີຂອງກົມຈັດຕັ້ງ-ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບຂອງຫ້ອງການ, ບັນດາກົມກ່ຽວຂ້ອງ ແລະ ຕາມການກໍານົດຕໍາແໜ່ງງານ.

3.2 ການແຕ່ງຕັ້ງ, ຍົກຍ້າຍຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການກວດກາລັດ ກະຊວງ-ອົງການ.

- ຫົວໜ້າກົມກວດກາລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີ ຂອງລັດຖະມົນຕີ ຫຼື ຫົວໜ້າອົງການ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາແຫ່ງລັດ; ສໍາລັບ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າກົມກວດກາລັດ ຂອງສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາແຫ່ງລັດ;
- ຮອງຫົວໜ້າກົມກວດກາລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍລັດຖະມົນຕີ ຫຼື ຫົວໜ້າອົງການ ບົນພື້ນຖານການເຫັນດີເປັນເອກະພາບ ຂອງກະຊວງພາຍໃນ;
- ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍລັດຖະມົນຕີ ຫຼື ຫົວໜ້າອົງການ ຕາມການສະເໜີ ຂອງກົມຈັດຕັ້ງ-ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບ ກັບຫົວໜ້າກົມກວດກາລັດ ຂອງກະຊວງ-ອົງການທີ່ກ່ຽວຂ້ອງ;

3.3 ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການກວດກາລັດແຂວງ, ນະຄອນຫຼວງ.

- ປະທານອົງການກວດກາລັດແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງກອງປະຊຸມສະພາປະຊາຊົນແຂວງ, ນະຄອນຫຼວງ ພິຈາລະນາຮັບຮອງ;
- ຮອງປະທານອົງການກວດກາລັດແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງປະທານ ອົງການກວດກາລັດແຂວງ, ນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ຖືກແຕ່ງຕັ້ງ, ຍົກຍ້າຍຫຼືປົດຕໍາແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງປະທານອົງການກວດກາລັດແຂວງ, ນະຄອນຫຼວງ.

3.4 ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການກວດກາລັດ ພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ.

- ຫົວໜ້າ, ຮອງຫົວໜ້າຂະແໜງກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີ ຂອງຫົວໜ້າພະແນກການອ້ອມຂ້າງ

ແຂວງ, ນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາລັດແຂວງ, ນະຄອນຫຼວງ.

- ສໍາລັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າ, ຮອງຫົວໜ້າຂະແໜງກວດກາລັດ ຂອງສະພາປະຊາຊົນແຂວງ, ນະຄອນຫຼວງ, ສານປະຊາຊົນແຂວງ, ນະຄອນຫຼວງ, ອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ ແລະ ອົງການອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາລັດແຂວງ, ນະຄອນຫຼວງ.

**3.5 ການແຕ່ງຕັ້ງ, ຍົກຍ້າຍຫຼື ປົດຕໍາແໜ່ງ ບຸກຄະລາກອນ ຂອງອົງການກວດກາລັດເມືອງ, ນະຄອນ.**

- ປະທານອົງການກວດກາລັດເມືອງ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານອົງການກວດກາແຫ່ງລັດ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາລັດແຂວງ, ນະຄອນຫຼວງ ແລະ ເຈົ້າເມືອງ, ເຈົ້ານະຄອນ;

- ຮອງປະທານອົງການກວດກາລັດເມືອງ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍເຈົ້າເມືອງ, ເຈົ້ານະຄອນ ຕາມການສະເໜີ ຂອງປະທານອົງການກວດກາລັດເມືອງ, ນະຄອນ;

- ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍເຈົ້າເມືອງ, ເຈົ້ານະຄອນ ຕາມການສະເໜີ ຂອງປະທານອົງການກວດກາລັດເມືອງ, ນະຄອນ.

**II. ກົງຈັກຊ່ວຍວຽກຂອງ ຄະນະກວດກາພັກ ແລະ ອົງການກວດກາລັດ ແຕ່ລະຂັ້ນ;**

**1. ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ປະກອບມີ:**

- ຫ້ອງການ;
- ກົມຈັດຕັ້ງ-ພະນັກງານ;
- ກົມຄົ້ນຄວ້າ ແລະ ວາລະສານກວດກາ;
- ກົມຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີ;
- ກົມກວດກາພັກ;
- ກົມກວດກາລັດ;
- ກົມຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ;
- ກົມພົວພັນຕ່າງປະເທດ;
- ກົມຕິດຕາມ, ກວດກາການປະຕິບັດຜົນຂອງການກວດກາ.

**2. ຄະນະກວດກາພັກ ແລະ ອົງການກວດກາລັດກະຊວງ-ອົງການ ແມ່ນກົມກວດກາລັດ ປະກອບມີ:**

- ພະແນກຄົ້ນຄວ້າ-ສັງລວມ;
- ພະແນກກວດກາພັກ;
- ພະແນກກວດກາລັດ;
- ພະແນກຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ;
- ພະແນກຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີ.

ກໍລະນີ ກົມວິຊາການ ທີ່ຂຶ້ນກັບກະຊວງ-ອົງການ ທີ່ເຫັນວ່າເປັນກົມທີ່ກ່ຽວພັນເຖິງການຄຸ້ມຄອງ-ນໍາໃຊ້ຊັບສິນ, ງົບປະມານເງິນກູ້ຢືມ, ເງິນຊ່ວຍເຫຼືອ ມີຄວາມຈໍາເປັນສ້າງຕັ້ງພະແນກກວດກາລັດ ຂອງຕົນຂຶ້ນໄດ້ໃຫ້ຈັດຕັ້ງປະຕິບັດດັ່ງນີ້:

+ ກົມໃຫຍ່, ກົມ, ຫ້ອງການ ແລະ ສະຖາບັນອື່ນ ທີ່ຂຶ້ນກັບກະຊວງ-ອົງການ ທີ່ມີຄວາມຈໍາເປັນສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນ ແມ່ນການຈັດຕັ້ງນັ້ນ ເປັນຜູ້ຄົ້ນຄວ້າແລ້ວນໍາສະເໜີຕໍ່ລັດຖະມົນຕີ ຫຼື ຫົວໜ້າອົງການຂອງຕົນພິຈາລະນາ ເພື່ອສະເໜີຕໍ່ການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາ.

+ ໃນກໍລະນີ ກົມໃຫຍ່, ກົມ, ຫ້ອງການ ແລະ ສະຖາບັນອື່ນ ທີ່ໄດ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນໃນໄລຍະຜ່ານມາແລ້ວ ກໍໃຫ້ຮັກສາໄວ້ຄືເກົ່າ.

+ ສໍາລັບບັນດາຫ້ອງການຂັ້ນເມືອງ ທີ່ຂຶ້ນກັບສາຍຕັ້ງ ໃນກໍລະນີທີ່ເຫັນວ່າມີຄວາມຈໍາເປັນກໍສາມາດສ້າງຕັ້ງກົງຈັກກວດກາລັດຂອງຕົນ; ໃນກໍລະນີຫ້ອງການໃດໄດ້ສ້າງຕັ້ງຂຶ້ນແລ້ວ ແມ່ນໃຫ້ຮັກສາໄວ້ຄືເກົ່າ.

+ ກໍລະນີອົງການໃດທີ່ບໍ່ມີກົມກວດກາໃຫ້ສ້າງຕັ້ງເປັນພະແນກກວດກາຂຶ້ນກັບກົມຈັດຕັ້ງ-ພະນັກງານ ເພື່ອເຮັດພາລະບົດບາດກວດກາພັກ, ກວດກາລັດ, ສະກັດກັ້ນ-ຕ້ານການສໍ້ລາດບັງຫຼວງ ແລະ ວຽກງານຄົ້ນຄວ້າພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງພົນລະເມືອງ.

**3. ຄະນະກວດກາພັກ ແລະ ອົງການກວດກາລັດແຂວງ, ນະຄອນຫຼວງ ປະກອບມີ:**

- ຫ້ອງການຄົ້ນຄວ້າ-ສັງລວມ;
- ຂະແໜງກວດກາພັກ;
- ຂະແໜງກວດກາລັດ;
- ຂະແໜງຕ້ານ ແລະ ສອບສວນການສໍ້ລາດບັງຫຼວງ;
- ຂະແໜງຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີ.

**4. ຄະນະກວດກາພັກ ແລະ ອົງການກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ ປະກອບມີ:**

ອົງການກວດກາລັດຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ ແມ່ນຂະແໜງກວດກາລັດ (ເຮັດໜ້າທີ່ທັງວຽກກວດກາພັກ, ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ຄົ້ນຄວ້າຄໍາຮ້ອງ ແລະ ຄໍາສະເໜີ).

**5. ຄະນະກວດກາພັກ ແລະ ອົງການກວດກາລັດເມືອງ, ນະຄອນ ປະກອບມີ:**

- ໜ່ວຍງານຄົ້ນຄວ້າ-ສັງລວມ;
- ໜ່ວຍງານກວດກາພັກ;(ທັງເຮັດໜ້າທີ່ຄົ້ນຄວ້າຄໍາຮ້ອງ ຕໍ່ການຈັດຕັ້ງພັກ, ສະມາຊິກພັກ)
- ໜ່ວຍງານກວດກາລັດ.(ທັງເຮັດໜ້າທີ່ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ຄົ້ນຄວ້າຄໍາຮ້ອງ-ຄໍາສະເໜີ)

**III. ການຮັບຮອງພາລະບົດບາດຂອງຄະນະກວດກາພັກ ແລະ ອົງການກວດກາລັດ ແຕ່ລະຂັ້ນ:**

**1. ພາລະບົດບາດ ຂອງຄະນະກວດກາພັກ ແຕ່ລະຂັ້ນ.**

ພາລະບົດບາດຂອງຄະນະກວດກາພັກຂັ້ນໃດ ແມ່ນສະຫາຍເລຂາຄະນະພັກ ຫຼື ຄະນະປະຈໍາພັກຂັ້ນນັ້ນເປັນຜູ້ຕົກລົງ ຕາມການສະເໜີ ຂອງຄະນະກວດກາພັກຂັ້ນຕົນ ໂດຍຜ່ານການເຫັນດີຂອງຄະນະກວດກາພັກຂັ້ນເທິງຖັດຕົນ.

**2. ພາລະບົດບາດ ຂອງອົງການກວດກາລັດ ແຕ່ລະຂັ້ນ.**

2.1 ພາລະບົດບາດ ຂອງອົງການກວດກາແຫ່ງລັດ ແມ່ນ ປະທານປະເທດ ແຫ່ງ ສປປ ລາວ ເປັນຜູ້ຕົກລົງ;

2.2 ພາລະບົດບາດ ຂອງອົງການກວດກາລັດກະຊວງ-ອົງການ(ກົມກວດກາລັດ ຫຼື ພະແນກກວດກາລັດ) ແມ່ນລັດຖະມົນຕີກະຊວງ-ຫົວໜ້າອົງການ ກ່ຽວຂ້ອງເປັນຜູ້ຕົກລົງ ບົນພື້ນຖານການເຫັນດີເປັນເອກະພາບ ຈາກອົງການກວດກາແຫ່ງລັດ;

ສໍາລັບ ພາລະບົດບາດ ຂອງພະແນກກວດກາລັດ ຫຼື ຫ້ອງການກວດກາລັດ ທີ່ຂຶ້ນກັບກົມວິຊາການ ຂອງກະຊວງ-ອົງການ ແມ່ນມອບໃຫ້ກົມກວດກາລັດກະຊວງ-ອົງການນັ້ນ ເປັນຜູ້ຄົ້ນຄວ້າແລ້ວນໍາສະເໜີຕໍ່ລັດຖະມົນຕີ-ຫົວໜ້າອົງການເປັນຜູ້ຕົກລົງ.

2.3 ພາລະບົດບາດ ຂອງອົງການກວດກາລັດແຂວງ, ນະຄອນຫຼວງ ແມ່ນ ປະທານອົງການກວດກາແຫ່ງລັດເປັນຜູ້ຕົກລົງ;

2.4 ພາລະບົດບາດ ຂອງອົງການກວດກາລັດ ຂອງພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ ແມ່ນລັດຖະມົນຕີ, ຫົວໜ້າອົງການຕາມສາຍຕັ້ງ ເປັນຜູ້ຕົກລົງ ບົນພື້ນຖານການເຫັນດີເປັນເອກະພາບ ກັບຫົວໜ້າພະແນກການອ້ອມຂ້າງແຂວງ, ນະຄອນຫຼວງ ແລະ ອົງການກວດກາລັດແຂວງ, ນະຄອນຫຼວງ;

ສໍາລັບພາລະບົດບາດ ຂອງໜ່ວຍງານກວດກາລັດ ຂອງຫ້ອງການຂັ້ນເມືອງ ມອບໃຫ້ຂະແໜງກວດກາລັດຕາມສາຍຕັ້ງ ຂອງແຂວງນັ້ນ ເປັນຜູ້ຄົ້ນຄວ້າແລ້ວສະເໜີຕໍ່ຫົວໜ້າພະແນກການຂັ້ນແຂວງເປັນຜູ້ຕົກລົງ.

2.5 ພາລະບົດບາດ ຂອງອົງການກວດກາລັດເມືອງ, ນະຄອນ ແມ່ນ ປະທານອົງການກວດກາແຫ່ງລັດ ເປັນຜູ້ຕົກລົງ.

**IV.** ວິທີຈັດຕັ້ງປະຕິບັດ.

1. ຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ ຮັບຜິດຊອບຈັດກອງປະຊຸມເຜີຍແຜ່, ແນະນຳ-ເຊື່ອມຊຶມຄຳແນະນຳສະບັບນີ້ ໃຫ້ບັນດາກະຊວງ-ອົງການ, ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ເພື່ອເອກະພາບ ແລະ ນຳໄປຈັດຕັ້ງຜັນຂະຫຍາຍ;

2. ມອບໃຫ້ຄະນະພັກ, ອົງການປົກຄອງ ແລະ ຄະນະກວດກາແຕ່ລະຂັ້ນ ຄົ້ນຄວ້າ, ເຊື່ອມຊຶມ, ກຳແໜ້ນ ແລະ ຈັດຕັ້ງເຜີຍແຜ່ເນື້ອໃນຄຳແນະນຳສະບັບນີ້ ໃຫ້ທຸກການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ ແລະ ການຈັດຕັ້ງອື່ນໆຂອງພັກ-ລັດ ຕະຫຼອດຮອດສະມາຊິກພັກ, ພະນັກງານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນເອກະພາບ;

3. ຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ຮັບຜິດຊອບນຳພາ-ຊີ້ນຳ ຄະນະກວດກາພັກ ແລະ ອົງການກວດກາລັດຂັ້ນຕົນ ຄົ້ນຄວ້າ ແລະ ດຳເນີນປັບປຸງກົງຈັກການຈັດຕັ້ງ ຂອງຄະນະກວດກາພັກ ແລະ ອົງການກວດກາລັດຕາມເນື້ອໃນຄຳແນະນຳສະບັບນີ້ໃຫ້ຖືກຕ້ອງ ຕາມກົດລະບຽບພັກ, ກົດໝາຍກວດກາລັດ ແລະ ຄຳແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ;

4. ຄະນະກວດກາພັກ ແລະ ອົງການກວດກາລັດ ແຕ່ລະຂັ້ນ ຕ້ອງເປັນເຈົ້າການຄົ້ນຄວ້າ ເຊື່ອມຊຶມ, ກຳແໜ້ນ ແລະ ດຳເນີນການປັບປຸງການຈັດຕັ້ງ, ພາລະບົດບາດ, ໜ້າທີ່-ສິດ ແລະ ບຸກຄະລາກອນຂອງຕົນ ໃຫ້ຖືກຕ້ອງຕາມຄຳແນະນຳສະບັບນີ້ ໂດຍມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອເຮັດໃຫ້ຄະນະກວດກາພັກ ແລະ ອົງການກວດກາລັດຂັ້ນຕົນມີຄວາມເຂັ້ມແຂງ ສາມາດເປັນເສນາທິການຊ່ວຍຄະນະພັກ ແລະ ອົງການປົກຄອງຂັ້ນຕົນ ຢ່າງມີປະສິດທິພາບ ແລະ ປະສິດທິຜົນສູງ;

5. ຜ່ານການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໃຫ້ມີການປະເມີນ, ຖອດຖອນບົດຮຽນ, ລາຍງານເປັນປົກກະຕິ ຕໍ່ຄະນະພັກຂັ້ນຕົນ ແລະ ຄະນະກວດກາຂັ້ນເທິງ.

ຄຳແນະນຳສະບັບນີ້ປ່ຽນແທນບົດແນະນຳເລກທີ **192**/ຄກສພ, ລົງວັນທີ **26** ມິຖຸນາ **2017** ແລະ ແຈ້ງການເລກທີ **227**/ຄກສພ, ລົງວັນທີ **21** ກໍລະກົດ **2022**.

**ປະທານ ຄະນະກວດກາສູນກາງພັກ**

ຄຳພັນ ພົມມະທັດ